ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 02 ສປປ

ລົງວັນທີ-------

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ວ່າດ້ວຍການດັດແກ້ອັດຕາພາສີຂາເຂົ້າ

ແລະ ນຳໃຊ້ອັດຕາອາກອນຊົມໃຊ້ໃຫມ່ສຳລັບ

ສິນຄ້າເຄື່ອງຂອງຊັ້ນສູງຈຳນວນໜຶ່ງ.

---

- ອີງຕາມລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫມວດທີ V ມາດຕາ 53, ຂໍ້ 2.

- ອີງຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 14/ຄປຈ ລົງວັນທີ 7 ພຶດສະພາ 1997 ວ່າດ້ວຍການດັດແກ້ອັດຕາພາສີຂາເຂົ້າ ແລະ ນຳໃຊ້ອັດຕາອາກອນຊົມໃຊ້ໃໝ່ ສຳລັບບາງຊະນິດສິນຄ້າເຄື່ອງຂອງຊັ້ນສູງຈຳນວນໜຶ່ງ.

- ອີງຕາມໜັງສືສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 14/ຄປຈ, ລົງວັນທີ 7 ພຶດສະພາ 1997 ກ່ຽວກັບການສະເໜີອອກລັດຖະບັນຍັດ ວ່າດ້ວຍການດັດແກ້ອັດຕາພາສີຂາເຂົ້າ ແລະນຳໃຊ້ອາກອນຊົມໃຊ້ໃໝ່ ສຳລັບບາງຊະນິດສິນຄ້າເຄື່ອງຂອງຊັ້ນສູງຈຳນວນໜຶ່ງ.

ປະທານປະເທດ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະບັນຍັດ :

<u>ມາດຕາ 1</u> : ຫລຸດອັດຕາພາສີຂາເຂົ້າສຳລັບສິນຄ້າເຄື່ອງຂອງທຸກຊະນິດທີ່ມີອັດຕາພາສີຂາເຂົ້າສູງກວ່າລະດັບ 40% ນັ້ນໃຫ້ລົງມາຢູ່ໃນລະດັບ 40%.

ມາດຕາ 2 : ດັດແກ້ອາກອນຊົມໃຊ້ ສຳລັບສິນຄ້າທີ່ຖືກເກັບອາກອນປະເພດນີ້ມາແລ້ວ; ສ່ວນສິນຄ້າຊະນິດອື່ນທີ່ບໍ່ທັນເຄີຍເກັບອາກອນການໃຊ້ ໃນໄລຍະຜ່ານມາເຊັ່ນ : ຍານພາຫະນະ, ເຄື່ອງໃຊ້ດ້ວຍໄຟຟ້າ ໃຫ້ປະຕິບັດອາກອນຊົມໃຊ້ໃຫມ່ ຕາມອັດຕາທີ່ໄດ້ກຳນົດໄວ້ໃນຕາຕະລາງລຸ່ມນີ້ :

| ເລກ ລະຫັດ ເຄົ້າ | ເລກ ລະຫັດ ຍ່ອຍ | ລາຍການສິນຄ້າ | ຫົວ ໜ່ວຍ ສະຖິຕິ | ອັດຕາ ພາສີ ຂາເຂົ້າ (%) | ອັດຕາ ອາກອນ ຊົມໃຊ້ (%) |
|---|---|---|---|---|---|
| | | I. <u>ຍານພາຫະນະ</u> | | | |
| 87.02 | | ຍານພາຫະນະສຳລັບບັນທຸກ ແຕ່ສິບຄົນຂຶ້ນໄປລວມທັງຜູ້ຂັບຂີ່. | | | |
| | 8702.10 | - ມີຈັກມີລູກສູບໄຕ້ໂດຍການອັດ (ດີເອແຊນ ຫຼືເຄິ່ງດີເອແຊນ) | ຄັນ | 20 | 14 |
| | 8702.90 | - ອື່ນໆ. | ອັນ | 20 | 14 |
| 87.03 | | ລົດຍົນໃຊ້ທ່ອງທ່ຽວ ແລະ ຍານພາຫະນະອື່ນໆທີ່ສ້າງຂຶ້ນເພື່ອຂົນສົ່ງຄົນເປັນຕົ້ນຕໍ ( ນອກຈາກທີ່ບົ່ງໄວ້ 87.02 ) ລວມທັງຍານພາຫະນະ ຊະນິດ " ແບຣກ = break " ແລະ " ລົດແຂ່ງ " | | | |
| | | - ຍານພາຫະນະອື່ນໆ ທີ່ມີຈັກ ແບບແລ່ນສຳລັບຈູດໄຕ້ດ້ວຍປະກາຍໄຟ. | | | |
| | 8703.21 | -- ທີ່ມີລູກສູບຂະໜາດບໍ່ເກີນ 1.000 ຊມ3 | ຄັນ | 40 | 51 |
| | 8703.22 | -- ທີ່ລູກສູບຂະໜາດເກີນກວ່າ 1.000 ຊມ$^3$ ແຕ່ບໍ່ເກີນ 1.500 ຊມ$^3$ | ຄັນ | 40 | 51 |
| | 8703.23 | -- ທີ່ລູກສູບຂະໜາດເກີນກວ່າ 1.500 ຊມ$^3$ ແຕ່ບໍ່ເກີນ 3.000 ຊມ$^3$ | ຄັນ | 40 | 60 |
| | 8703.24 | -- ທີ່ມີລູກສູບຂະໜາດເກີນກວ່າ 3.000 ຊມ$^3$ | ຄັນ | 40 | 92 |
| | | - ຍານພາຫະນະອື່ນ, ທີ່ມີຫົວຈັກຈູດໄຕ້ດ້ວຍການອັດ ( ດີເອແຊນ ຫຼື ເຄິ່ງດີເອແຊນ) | ຄັນ | 40 | |
| | 8703.31 | -- ທີ່ມີລູກສູບຂະໜາດບໍ່ເກີນ 1.500 ຊມ$^3$ | ຄັນ | 40 | 51 |
| | 8703.32 | -- ທີ່ມີລູກສູບຂະໜາດເກີນກວ່າ 1.500 ຊມ$^3$ ແຕ່ບໍ່ເກີນ 3.000 ຊມ$^3$ | ຄັນ | 40 | 60 |
| | 8703.33 | - ທີ່ມີລູກສູບຂະໜາດເກີນກວ່າ 3.000 ຊມ$^3$ ຂຶ້ນໄປ. | ຄັນ | 40 | 92 |
| | 8703.34 | - ລົດຈິບທຸກປະເພດ. | ຄັນ | 40 | 19 |
| | 8703.90 | - ອື່ນໆ | ຄັນ | 40 | 51 |

| | | | | | |
|---|---|---|---|---|---|
| 87.04 | | ຍານພາຫະນະສຳລັບບັນທຸກສິນຄ້າ | | | |
| | 8704.21 | - ທີ່ບັນຈຸນ້ຳໜັກສູງສຸດໄດ້ບໍ່ເກີນ 5 ໂຕນ. | ຄັນ | 30 | 14 |
| | 8704.31 | - ທີ່ບັນຈຸນ້ຳໜັກສູງສຸດໄດ້ບໍ່ເກີນ 5 ໂຕນ. | ຄັນ | 30 | 12 |
| 87.06 | | ຮ່າງ(chassis) ຍານພາຫະນະໃນ 87.01 ເຖິງ 87.05 ທີ່ປະກອບຈັກແລ້ວ. | | | |
| | 8706.10 | - ຂອງຍານພາຫະນະໃນ 87.03. | ອັນ | 40 | 51 |
| 87.07 | | ຕົວຖັງ (carrosseries) ຂອງຍານຍົນໃນ 87.01 ເຖິງ 87.05 ລວມທັງກາບິນ (ຫ້ອງຂັບ). | | | |
| | 8707.10 | - ຂອງຍານພາຫະນະໃນ 87.03 | | | 51 |
| 87.11 | | ລົດຈັກ (ລວມທັງລົດຈັກຂະນິດ ຊີໂກຼໂມເຕີ = " cyclo-moteurs ") ແລະ ລົດມີລໍ້ຕິດຕັ້ງຈັກຊ່ວຍ, ຈະມີພ່ວງຂ້າງຫຼືບໍ່ກໍ່ຕາມ; ພ່ວງຂ້າງ (side-cars). | | | |
| | 8711.30 | - ທີ່ມີຈັກຂະນິດສູບແລ່ນສະຫລັບຂະໜາດເກີນກວ່າ 250 ຊມ$^3$ ແຕ່ບໍ່ເກີນ 500 ຊມ$^3$. | | | 30 |
| | 8711.40 | - ທີ່ມີຈັກຂະນິດສູບແລ່ນສະຫລັບຂະໜາດເກີນກວ່າ 500 ຊມ$^3$ ແຕ່ບໍ່ເກີນ 800 ຊມ$^3$. | ຄັນ | 40 | 30 |
| | 8711.50 | - ທີ່ມີຈັກຂະນິດສູບແລ່ນສະຫລັບຂະໜາດເກີນກວ່າ 800 ຊມ$^3$ | ຄັນ | 40 | 30 |
| | 8711.90 | - ອື່ນໆ. | ຄັນ | 40 | 30 |
| | | II. <u>ສິນຄ້າເຄື່ອງຂອງອື່ນໆ</u> : | | | |
| 22.03 | 2203.00 | ເບຍຈາກມານ (bieres de malt) | ລິດ | 40 | 30 |
| 24.02 | | ຊີກາ(cigares) ລວມທັງທີ່ມີກົ້ນຕັດ, ຊີກາຣີໂຍ(cigarillos) ແລະ ກອກຢາ (cigarettes), ເຮັດຈາກຢາສູບ ຫຼື ສິ່ງທົດແທນຢາສູບ. | | | |
| | 2402.10 | - ຊີກາ (ລວມທັງທີ່ມີກົ້ນຕັດ), ຊີກາຣີໂຍທີ່ມີຢາສູບ. | ກລ | 40 | 30 |
| | 2402.20 | - ກອກຢາ ເປັນຊອງ (cigarettes). | ກລ | 40 | 30 |
| | 2402.90 | - ອື່ນໆ. | ກລ | 40 | 30 |
| 84.15 | | ເຄື່ອງຈັກແລະເຄື່ອງໃຊ້ກົນສຳລັບການປັບອາກາດທີ່ມີພັດລົມທີ່ມີຫົວຈັກແລະອຸປະກອນ ສະເພາະສຳລັບປັບອຸນນະພູມ ແລະ ຄວາມຊຸ່ມລວມເຄື່ອງມືດັ່ງກ່າວທີ່ບໍ່ສາມາດແຍກຄວາມຊຸ່ມຕ່າງຫາກໄດ້. | | | |
| | 8415.10 | - ຂະນິດຕິດຝາ ຫຼື ນຳໃຊ້ປ່ອງຢ້ຽມທີ່ເປັນຮ່າງປະກອບອັນດຽວ. | ເຄື່ອງ | 20 | 5 |
| | 8415.81 | - ມີອຸປະກອນທຳຄວາມເຢັນ ແລະ ມີວາວປ່ຽນວົງຈອນຄວາມຮ້ອນ. | ອັນ | 20 | 5 |
| | 8415.82 | - ຂະນິດອື່ນໆ ທີ່ມີອຸປະກອນທຳຄວາມເຢັນ. | ອັນ | 20 | 5 |
| 84.18 | | ເຄື່ອງທຳຄວາມເຢັນ (Refrigerateurs) ເຄື່ອງເຮັດແຊ່ແຂງເກັບຮັກສາ (Congelateurs-conservateurs) ຂອງແລະອຸປະ | | | |

| | | | | | |
|---|---|---|---|---|---|
| | | ກອນເຄື່ອງຈັກແລະເຄື່ອງກົນຈັກອື່ນໆ ສຳລັບທຳຄວາມເຢັນທີ່ໃຊ້ອຸປະກອນໄຟຟ້າຫຼືຢ່າງອື່ນ: ເຄື່ອງສູບຄວາມຮ້ອນ ນອກຈາກເຄື່ອງຈັກ ແລະເຄື່ອງກົນສຳລັບປັບອາກາດຂອງ 84.15. | | | |
| | 8418.10 | - ເຄື່ອງລວມຕົວທີ່ມີເຄື່ອງທຳຄວາມເຢັນ(ຕູ້ເຢັນ) ແລະ ເຄື່ອງເຮັດການແຊ່ແຂງເກັບຮັກສາຂອງ(ຕູ້ແຊ່ແຂງ) ທີ່ມີປະຕູນອກແຍກຕົວກັນ. | ເຄື່ອງ | 10 | 5 |
| | | - ຕູ້ແຊ່ຊະນິດໃຊ້ໃນຄອບຄົວ : | | | |
| | 8418.21 | -- ແບບໃຊ້ຄວາມດັນ. | ເຄື່ອງ | 10 | 5 |
| | 8418.22 | -- ແບບໃຊ້ຄວາມດູດ ແລະ ແບບໃຊ້ໄຟຟ້າ. | ເຄື່ອງ | 10 | 5 |
| | 8418.29 | -- ອື່ນໆ. | ເຄື່ອງ | 10 | 5 |
| 84.50 | | ເຄື່ອງຈັກຊັກຜ້າ, ຈະມີອຸປະກອນເຄື່ອງທຳຄວາມແຫ້ງດ້ວຍກໍ່ຕາມ. | ເຄື່ອງ | 10 | 5 |
| | 8450.10 | - ເຄື່ອງຈັກທີ່ສາມາດຊັກໄດ້ ບໍ່ເກີນ 10 ກິໂລກຣາມ ຄິດໄລ່ຕາມນ້ຳໜັກຜ້າແຫ້ງ. | ເຄື່ອງ | 10 | 5 |
| | 8450.20 | - ເຄື່ອງຈັກທີ່ສາມາດຊັກໄດ້ເກີນ 10 ກິໂລກຣາມ ຄິດໄລ່ຕາມນ້ຳໜັກຜ້າແຫ້ງ. | ເຄື່ອງ | 10 | 5 |
| 85.09 | | ເຄື່ອງແມ່ເຫລັກໄຟຟ້າ ທີ່ມີຫົວຈັກໄຟຟ້າໃນຕົວ ສຳລັບໃຊ້ໃນຄອບຄົວ. | | | |
| | 8509.10 | - ເຄື່ອງດູດຂີ້ຝຸ່ນ. | ເຄື່ອງ | 10 | 5 |
| 85.16 | | ເຄື່ອງຕົ້ມນ້ຳຮ້ອນ ແລະ ເຄື່ອງໃຊ້ຈຸ່ມ, ຕົ້ມນ້ຳທີ່ໃຊ້ໄຟຟ້າ : ເຄື່ອງໄຟຟ້າສຳລັບໃຫ້ອາຍອຸ່ນໃນອາຄານບ້ານເຮືອນ, ໃນດິນ ຫຼື ສຳລັບໃຊ້ໃນທຳນອງຄ້າຍຄຽງ; ເຄື່ອງທຳຄວາມຮ້ອນໄຟຟ້າສຳລັບການແຕ່ງຜົມ ( ເຄື່ອງເປົ່າຜົມ, ເຄື່ອງດັດຜົມ, ເຫລັກດັດຜົມເປັນຕົ້ນ) ຫຼືສຳລັບເປົ່າມືໃຫ້ແຫ້ງ;ເຕົາລີດໄຟຟ້າ; ເຄື່ອງທຳຄວາມຮ້ອນໄຟຟ້າອື່ນສຳລັບໃຊ້ໃນຄອບຄົວ; ຕົວຕ້ານທານໃຫ້ຄວາມຮ້ອນ, ນອກຈາກທີ່ບົ່ງໄວ້ໃນ 85.45. | | | |
| | 8516.10 | - ເຄື່ອງຕົ້ມນ້ຳຮ້ອນ ແລະ ເຄື່ອງຕູ່ມຕົ້ມນ້ຳທີ່ໃຊ້ໄຟຟ້າ. | ເຄື່ອງ | 10 | 5 |
| 85.21 | | ເຄື່ອງບັນທຶກສຽງ ແລະ ເຄື່ອງຖ່າຍທອດສຽງແບບວີດີໂອ. | ອັນ | 20 | 5 |
| | 8521.10 | - ທີ່ໃຊ້ກາແຊັດ. | ອັນ | 20 | 5 |
| | 8521.90 | - ອື່ນໆ. | ອັນ | 20 | 5 |
| 85.25 | | ເຄື່ອງສົ່ງສຳລັບວິທະຍຸໂທລະສັບ, ວິທະຍຸໂທລະເລກ, ວິທະຍຸກະຈາຍສຽງ ຫຼື ໂທລະພາບ ສຳລັບບັນທຶກ ຫຼື ຖ່າຍທອດສຽງກໍ່ຕາມ, ກ້ອງຖ່າຍວີດີໂອ. | | | |
| | 8525.30 | - ກ້ອງຖ່າຍວີດີໂອ. | ເຄື່ອງ | 5 | 5 |
| 85.28 | | ເຄື່ອງຮັບໂທລະພາບ (ລວມທັງຈໍພາບວີດີໂອ " Moniteurs video " ແລະ ເຄື່ອງສາຍວີດີໂອ ) ຈະປະກອບໃນສິ່ງຫຸ້ມຫໍ່ດຽວກັນ, ເຂົ້າກັນ ເຄື່ອງຮັບວິທະຍຸກະຈາຍສຽງ ຫຼື ເຄື່ອງ | | | |

| | | | | | |
|---|---|---|---|---|---|
| 90.08 | 8528.10 | ບັນທຶກ ຫຼື ຖ່າຍທອດສຽງ ຫຼື ພາບ.<br>ເປັນສີ<br>ກ້ອງສາຍພາບບໍ່ຕິງ, ກ້ອງຖ່າຍຮູບສຳລັບຂະຫຍາຍ ຫຼື ຫຍໍ້ພາບເປັນອັນ. | ເຄື່ອງ | 20 | 5 |
| | 9008.30 | - ກ້ອງຖ່າຍຮູບບໍ່ຕິງຊະນິດອື່ນ. | ອັນ | 10 | 5 |
| | 9008.40 | - ກ້ອງຖ່າຍຮູບສຳລັບຂະຫຍາຍ ຫຼື ຫຍໍ້ພາບ | ອັນ | 10 | 5 |
| | 9008.90 | - ສິ້ນສ່ວນ ແລະ ອາໄຫລ່. | ກິໂລ | 10 | 5 |

<u>ມາດຕາ 3</u> : ມອບໃຫ້ລັດຖະບານ ເປັນຜູ້ແນະນຳ ແລະ ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

<u>ມາດຕາ 4</u> : ລັດຖະບັນຍັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 10 ພຶດສະພາ 1997.

ປະທານປະເທດ.

ໜູຮັກ ພູມສະຫວັນ